# ບົດຂ່າວ

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ປະຈຳປີ 2017, ຮັບຮອງແຜນການປະຈຳປີ 2018 ຂອງສາຂາ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ໃນວັນທີ 07-09 ກຸມພາ 2018, ທີ່ສຳນັກງານໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳປີ 2017 ຮັບຮອງແຜນການປີ 2018 ຂອງສາຂາທົ່ວລະບົບ ທຄຕລ, ພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແລະ ມີຜູ້ເຂົ້າຮ່ວມຂັ້ນ ຄະນະອຳນວຍການ, ຄະນະສາຂາ, ຄະນະພະແນກ, ຄະນະສູນ ແລະ ພະນັກງານທີ່ກ່ຽວຂ້ອງ ລວມທັງໝົດປະມານ 80 ທ່ານ.




ກອງປະຊຸມ ໄດ້ປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ທົ່ວລະບົບໃນປີ 2017, ປຶກສາຫາລືຫາວິທີແກ້ໄຂບັນຫາຫຍຸ້ງຍາກຂອງສາຂາ, ໄດ້ມີຄຳຖາມເຈາະຈີ້ມຕໍ່ກັບຜົນການດຳເນີນງານທີ່ຜ່ານມາຂອງສາຂາ ແລະ ໄດ້ພິຈາລະນາຮັບຮອງເອົາແຜນການ 2018 ຂອງບັນດາສາຂາເຊິ່ງລວມມີ: ແຜນການດຳເນີນງານ, ແຜນທຸລະກິດ, ແຜນຂະຫຍາຍຜະລິດຕະພັນ ແລະ ແຜນປະກອບວັດຖຸເຕັກນິກ ຂອງແຕ່ລະສາຂາ.

ທ່ານຜູ້ອຳນວຍການ ຍັງໄດ້ເຜີຍແຜ່ໃຫ້ບັນດາສາຂາ ແລະ ພະແນກການໄດ້ຮັບຮູ້ເຖິງແຜນການລວມປະຈຳປີ 2018 ຂອງ ທຄຕລ ທີ່ກຽມຈະນຳສະເໜີກອງປະຊຸມຜູ້ຖືຮຸ້ນປະຈຳປີ 2017 ພ້ອມທັງຮຽກຮ້ອງໃຫ້ບັນດາພະແນກ, ສູນ ແລະ ສາຂາ ຕ້ອງໄດ້ເຜີຍແຜ່ຕໍ່ໃຫ້ພະນັກງານຂອງຕົນໄດ້ຮັບຊາບເຂົ້າໃຈ ແລະ ຮ່ວມກັນເອົາໃຈໃສ່ຈັດຕັ້ງປະຕິບັດແຜນການດັ່ງກ່າວໃຫ້ສຳເລັດຜົນ.



ນອກນັ້ນ, ໃນກອງປະຊຸມກໍ່ໄດ້ນຳສະເໜີ 5 ຜະລິດຕະພັນໃໝ່ຂອງ ທຄຕລ ທີ່ກຳລັງຈະເປີດໃຫ້ບໍລິການສັງຄົມ, ໃຫ້ບັນດາສາຂາກໍາໄດ້ຄຸນລັກຊະນະຂອງ ແຕ່ລະຜະລິດຕະພັນ ເພື່ອກຳນົດເປົ້າໝາຍລູກຄ້າ ແລະ ວາງແຜນການຕະຫຼາດໃນການຂະຫຍາຍຜະລິດຕະພັນດັ່ງກ່າວໃຫ້ເໝາະສົມ. ໂດຍມີຜະລິດຕະພັນດັ່ງນີ້: BCEL Onepay, BCEL Oneheart, ເງິນຝາກມີກຳນົດທີ່ຫຼາກຫຼາຍ BCEL CDM (ຕູ້ຮັບຝາກເງິນ) ແລະ BCEL Smart Book (ປື້ມບັນຊີຍຸກໃໝ່).

